ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 0118 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 31 JAN 2020

# ຄໍາແນະນໍາ

# ກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດໍາລັດວ່າດ້ວຍແຫຼ່ງກໍາເນີດສິນຄ້ານໍາເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືສະເໜີຂອງ ກົມການນໍາເຂົ້າ ແລະ ສົ່ງອອກ ສະບັບເລກທີ 6100/ກຂອ.ຄຄ, ລົງວັນທີ 18 ທັນວາ 2019.

ເພື່ອຜັນຂະຫຍາຍເນື້ອໃນຂອງໝວດທີ 2 ຂອງດໍາລັດວ່າດ້ວຍແຫຼ່ງກໍາເນີດສິນຄ້ານໍາເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010 ແລະ ເພື່ອກໍານົດໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນ, ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ, ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ແລະ ເຮັດໃຫ້ວຽກງານຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ ສປປ ລາວ ໄດ້ຮັບສິດທິພິເສດ ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ໄດ້ຮັບປະສິດທິຜົນສູງ.

## ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຄໍາແນະນໍາ:

### I. ການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ

ການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ແມ່ນ ການຢັ້ງຢືນວ່າສິນຄ້ານັ້ນໄດ້ກໍາເນີດຂຶ້ນ ຫຼື ຜ່ານຂະບວນການຜະລິດຢູ່ ສປປ ລາວ ເພື່ອຈຸດປະສົງໃນການຂໍສິດທິພິເສດຕາມເງື່ອນໄຂຂອງລະບຽບແຫຼ່ງກໍາເນີດສິນຄ້າຂອງປະເທດຜູ້ໃຫ້ສິດທິພິເສດ. ໃນກໍລະນີປະເທດຜູ້ນໍາເຂົ້າທີ່ໃຫ້ສິດທິພິເສດທາງການຄ້າ ຫາກບໍ່ຕ້ອງການໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ, ບໍລິສັດ/ໂຮງງານ, ຜູ້ຜະລິດ, ຜູ້ສົ່ງອອກ ບໍ່ຈໍາເປັນຕ້ອງຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ.

ຜູ້ຂໍຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ໝາຍເຖິງ ບໍລິສັດ/ໂຮງງານ, ຜູ້ຜະລິດ, ຜູ້ສົ່ງອອກ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບສິດ.

ການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ປະກອບມີ ສອງ ຂັ້ນຕອນຄື ການຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກໍາເນີດ ແລະ ການຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ໂດຍມີລາຍລະອຽດ ດັ່ງນີ້:

1. **ການຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ (Confirmation of Product Eligibility: CPE)**

**1.1** ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ແມ່ນ ເອກະສານຮັບຮອງວ່າສິນຄ້າໄດ້ເກີດຂຶ້ນ ຫຼື ຜ່ານຂະບວນການຜະລິດໃນ ສປປ ລາວ ແລະ ມີເງື່ອນໄຂຄົບຖ້ວນຕາມລະບຽບແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

ການອອກໃບ CPE ແມ່ນເພື່ອນຳໃຊ້ເປັນບ່ອນອີງໃນການຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ (Certificate of Origin under the Preferential Scheme: CO) ແລະ ຕ້ອງໄດ້ອອກໃຫ້ທຸກລາຍການສິນຄ້າທີ່ຈະສົ່ງອອກທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ, ບໍ່ວ່າສິນຄ້ານັ້ນຈະເປັນສິນຄ້າທີ່ໄດ້ມາ ຫຼື ຜະລິດໂດຍນຳໃຊ້ວັດຖຸດິບພາຍໃນ ສປປ ລາວ ທັງໝົດ (Wholly Obtained or Produced Goods) ຫຼື ສິນຄ້າທີ່ໄດ້ມາ ຫຼື ຜະລິດໂດຍບໍ່ໄດ້ນຳໃຊ້ວັດຖຸດິບພາຍໃນ ສປປ ລາວ ທັງໝົດ (Not Wholly Obtained or Produced Goods).

**1.2** ຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສາມາດຂໍການຮັບຮອງການໄດ້ແຫຼ່ງກຳເນີດຂອງສິນຄ້ານຳ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດໃນຂອບເຂດທົ່ວປະເທດ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ. ເອກະສານປະກອບເພື່ອຂໍໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດມີດັ່ງນີ້:

1) ໃບຄຳຮ້ອງ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
2) ໃບແຈ້ງລາຄານຳເຂົ້າ (Import Invoice);
3) ໜັງສືຮັບຮອງລາຍລະອຽດ, ຂັ້ນຕອນການຜະລິດ, ຕົ້ນທຶນ ແລະ ລາຄາສິນຄ້າ ແລະ ແຜນວາດຂະບວນການຜະລິດ ຕາມແບບພິມ ທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
4) ເອກະສານຢັ້ງຢືນການໄດ້ມາ ຫຼື ການນຳເຂົ້າວັດຖຸດິບ;
5) ໃບແຈ້ງຂີດຄວາມສາມາດໃນການສົ່ງອອກປະຈຳປີ;
6) ໃບແຈ້ງແບບຢ່າງລາຍເຊັນຂອງບໍລິສັດ ຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ;
7) ໃບທະບຽນວິສາຫະກິດ ແລະ/ຫຼື ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ ສະບັບສຳເນົາ;
8) ໃບຢັ້ງຢືນການມອບພັນທະອາກອນປະຈຳປີ ສະບັບສຳເນົາ.

**1.3** ພາຍຫຼັງສຳເລັດການກວດກາຄວາມຖືກຕ້ອງທາງດ້ານເອກະສານປະກອບຕ່າງໆຂ້າງເທິງແລ້ວ, ເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ຕ້ອງລົງກວດກາໂຮງງານ ເພື່ອເບິ່ງຂະບວນການຜະລິດຕົວຈິງ ຫຼື ບ່ອນເກັບໄວ້ຂອງສິນຄ້າດັ່ງກ່າວ ໂດຍທັນທີ, ຊ້າສຸດບໍ່ໃຫ້ກາຍ ສາມ ວັນລັດຖະການ ເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງກັບລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້ານັ້ນໆ. ການເກັບກຳຂໍ້ມູນຕົວຈິງຢູ່ໂຮງງານແມ່ນ ໃຫ້ເກັບກຳຕາມແບບພິມທີ່ ກົມການນຳເຂົ້າ ແລະ ສົ່ງອອກ ໄດ້ກຳນົດ.

**1.4** ກຳນົດເວລາໃນການອອກໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ແມ່ນພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ; ແລະ ພາຍຫຼັງທີ່ສຳເລັດການລົງເບິ່ງຂະບວນການຜະລິດຕົວຈິງຂອງ ບໍລິສັດ/ໂຮງງານ.

**1.5** ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ແມ່ນອອກໃຫ້ ໜຶ່ງໃບ ຕໍ່ ໜຶ່ງລາຍການສິນຄ້າ ຕາມລະຫັດພາສີຍ່ອຍໃນລະດັບ ຫົກ ຕົວເລກ ໂດຍສອດຄ່ອງກັບສາລະບານສິນຄ້າ ແລະ ອັດຕາພາສີຂອງ ສປປ ລາວ ບົນພື້ນຖານລະບົບເອກະພາບອາຊຽນ. ຖ້າເງື່ອນໄຂການໄດ້ແຫຼ່ງກຳເນີດສິນຄ້າມີການປ່ຽນແປງ ຫຼື ມີລາຍການສິນຄ້າໃໝ່ສົ່ງ